**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------

ລັດຖະບານ

ເລກທີ: 101 /ລບ

ນະຄອນຫຼວງວຽງຈັນ, ວັນທີ 20.03.2017

# ດຳລັດ

## ວ່າດ້ວຍພັນທະບັດລັດຖະບານ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບປັບປຸງ ສະບັບເລກທີ 71/ ສພຊ, ລົງວັນທີ 16 ທັນວາ 2016;
- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມໜັງສືສະເໜີ ຂອງກະຊວງການເງິນ ສະບັບເລກທີ 0402/ກງ, ລົງວັນທີ 13 ກຸມພາ 2017.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການອອກ, ການຈຳໜ່າຍ, ການຊຳລະພັນທະບັດລັດຖະບານ, ການຄຸ້ມຄອງ ແລະ ການຕິດຕາມກວດກາ ວຽກງານພັນທະບັດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ, ໂປ່ງໃສ, ກວດສອບໄດ້ ແລະ ຍຸຕິທຳ ແນໃສ່ລະດົມທຶນທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃສ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃນແຕ່ລະໄລຍະ.

### ມາດຕາ 2 ພັນທະບັດລັດຖະບານ

ພັນທະບັດລັດຖະບານ ແມ່ນເຄື່ອງມືທາງດ້ານການເງິນ ປະເພດໜີ້ ທີ່ກະຊວງການເງິນເປັນຜູ້ຕາງໜ້າ ແລະ ໄດ້ຮັບມອບສິດຈາກລັດຖະບານໃນການອອກ, ຮັບປະກັນການຊຳລະຕົ້ນທຶນ ແລະ ດອກເບ້ຍ ຕາມທີ່ກຳນົດໄວ້ໃນໃບພັນທະບັດ, ສາມາດປ່ຽນຜູ້ຖືຄອງ ແລະ ນຳໃຊ້ເປັນຫຼັກຊັບຄ້ຳປະກັນໄດ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໃບພັນທະບັດລວມ** ໝາຍເຖິງ ໃບພັນທະບັດ ທີ່ບໍ່ບົ່ງຊື່ຂອງຜູ້ຖືຄອງ ຊຶ່ງຜູ້ອອກພັນທະບັດຕ້ອງນຳໄປຝາກໄວ້ຢູ່ສູນຮັບຝາກຫຼັກຊັບ;

2. **ໃບພັນທະບັດ** ໝາຍເຖິງ ໃບພັນທະບັດ ທີ່ບົ່ງຊື່ຂອງຜູ້ຖືຄອງ ທີ່ອອກໃຫ້ແກ່ຜູ້ລົງທຶນເປັນແຕ່ລະລາຍ;

3. **ພັນທະບັດຈົດທະບຽນ** ໝາຍເຖິງ ພັນທະບັດ ທີ່ໄດ້ຈົດທະບຽນຢູ່ຕະຫຼາດຫຼັກຊັບລາວ ເພື່ອດຳເນີນການຊື້-ຂາຍ;

4. **ສະກຸນເງິນ** ໝາຍເຖິງ ສະກຸນເງິນກີບ ຫຼື ສະກຸນເງິນຕາຕ່າງປະເທດ;

5. **ໜັງສືຊວນຊື້** ໝາຍເຖິງ ຂໍ້ມູນກ່ຽວກັບພັນທະບັດ ທີ່ສະເໜີອອກຈຳໜ່າຍເປັນຕົ້ນ ວິທີການສະເໜີຂາຍ, ຈຳນວນ, ມູນຄ່າກຳນົດ, ລາຄາຂາຍ, ໄລຍະເວລາຂາຍ, ວິທີການຈອງຊື້, ຜົນຕອບແທນ ຫຼື ອັດຕາດອກເບ້ຍ ການສົ່ງມອບ ແລະ ເງື່ອນໄຂ ໃນການໂອນພັນທະບັດທີ່ກຳນົດ ໂດຍຜູ້ອອກພັນທະບັດ;

6. **ສັນຍາແຕ່ງຕັ້ງຕົວແທນຈຳໜ່າຍ** ໝາຍເຖິງ ການຕົກລົງລະຫວ່າງຜູ້ອອກພັນທະບັດ ແລະ ຕົວແທນທີ່ຈະຈຳໜ່າຍພັນທະບັດ;

7. **ສັນຍາຕົວແທນໂອນພັນທະບັດ** ໝາຍເຖິງ ການຕົກລົງລະຫວ່າງຜູ້ອອກພັນທະບັດ ແລະ ສູນຮັບຝາກຫຼັກຊັບ ເພື່ອດຳເນີນການໂອນ ແລະ ບັນທຶກຂໍ້ມູນຂອງຜູ້ຖືຄອງພັນທະບັດ;

8. **ຜູ້ຄ້ຳປະກັນການຈຳໜ່າຍ** ໝາຍເຖິງ ຜູ້ທີ່ໄດ້ຮັບອະນຸຍາດໃຫ້ຄ້ຳປະກັນການຈຳໜ່າຍພັນທະບັດ ດ້ວຍການຊ່ວຍຈຳໜ່າຍ ຫຼື ຮັບຊື້ພັນທະບັດທັງໝົດ ຫຼື ບາງສ່ວນ ຈາກຜູ້ອອກພັນທະບັດ ໃນສ່ວນທີ່ຈຳໜ່າຍບໍ່ໝົດ;

9. **ຜູ້ຄ້າພັນທະບັດ** ໝາຍເຖິງ ຜູ້ທີ່ໄດ້ຮັບອະນຸຍາດເປັນສື່ກາງໃນການຈຳໜ່າຍແທນຜູ້ອອກພັນທະບັດ ຕາມມູນຄ່າຕົວຈິງທີ່ຂາຍໄດ້ໃນຕະຫຼາດ;

10. **ທີ່ປຶກສາດ້ານການເງິນ** ໝາຍເຖິງ ບໍລິສັດ ທີ່ໄດ້ຮັບອະນຸຍາດໃຫ້ຄຳປຶກສາກ່ຽວກັບການຄຸ້ມຄອງບໍລິຫານດ້ານການເງິນ, ການເຄື່ອນໄຫວທຸລະກິດ ແລະ ອື່ນໆ ເພື່ອກະກຽມການອອກ ແລະ ຈຳໜ່າຍພັນທະບັດ;

11. **ທີ່ປຶກສາດ້ານກົດໝາຍ** ໝາຍເຖິງ ບໍລິສັດ ທີ່ໄດ້ຮັບອະນຸຍາດໃຫ້ຄຳປຶກສາກ່ຽວກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນການອອກ ແລະ ຈຳໜ່າຍພັນທະບັດ;

12. **ສູນຮັບຝາກຫຼັກຊັບ** ໝາຍເຖິງ ສູນຮັບຝາກ, ຂຶ້ນທະບຽນ, ຄຸ້ມຄອງບັນຊີທະບຽນຜູ້ຖືຄອງພັນທະບັດ, ເກັບຮັກສາ ແລະ ດຳເນີນການໂອນພັນທະບັດ;

13. **ການຈັດລຳດັບຄວາມໜ້າເຊື່ອຖື** ໝາຍເຖິງ ການຈັດລຳດັບຄຸນນະພາບ ແລະ ຄວາມສ່ຽງຂອງພັນທະບັດ, ການຈັດລຳດັບການຄຸ້ມຄອງບໍລິຫານ ແລະ ຖານະການເງິນຂອງຜູ້ອອກພັນທະບັດ;

14. **ອັດຕາດອກເບ້ຍຄົງທີ່** ໝາຍເຖິງ ອັດຕາທີ່ບໍ່ມີການປ່ຽນແປງ ນັບແຕ່ມື້ອອກພັນທະບັດ ຈົນຮອດມື້ຄົບກຳນົດ;

15. **ອັດຕາດອກເບ້ຍລອຍຕົວ** ໝາຍເຖິງ ອັດຕາທີ່ມີການປ່ຽນແປງນັບແຕ່ມື້ອອກພັນທະບັດລັດຖະ ບານ ຈົນຮອດມື້ຄົບກຳນົດການໄຖ່ຖອນ;

16. **ລະຫັດຫຼັກຊັບສາກົນ (International Securities Identification Number : ISIN Code)** ໝາຍເຖິງ ລະຫັດຫຼັກຊັບສາກົນ ຊຶ່ງກຳນົດໂດຍອົງການຫຼັກຊັບສາກົນ (Association of National Numbering Agencies: ANNA) ໂດຍປະກອບມີລະຫັດ 12 ຫຼັກ ຊຶ່ງກຳນົດ ປະເທດ, ອົງກອນ ຫຼື ບໍລິສັດ, ຈຳນວນຄັ້ງ ແລະ ປະເພດຫຼັກຊັບ;

17. **ທະນາຄານຕົວແທນ (Correspondant Bank)** ໝາຍເຖິງ ທະນາຄານທຸລະກິດທີ່ຖືກມອບ ໝາຍ ໂດຍຕົວແທນຈຳໜ່າຍໃຫ້ເປັນຜູ້ຊຳລະສະສາງໃນການດຳເນີນການຊື້-ຂາຍ ພັນທະບັດ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບພັນທະບັດ

ລັດ ສົ່ງເສີມການພັດທະນາຕະຫຼາດພັນທະບັດ ແລະ ຕະຫຼາດທຶນພາຍໃນປະເທດ ໃຫ້ມີຄວາມຫຼາກຫຼາຍ, ເຕີບໃຫຍ່ເຂັ້ມແຂງ, ມີລະບົບການຄຸ້ມຄອງ ແລະ ປົກປ້ອງ, ມີກົນໄກການບໍລິຫານ ແລະ ບໍລິການ ເປັນແຫຼ່ງລະດົມທຶນທີ່ມີປະສິດທິຜົນ ເພື່ອດຸ່ນດ່ຽງງົບປະມານແຫ່ງລັດ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ ພັດທະນາຕະຫຼາດພັນທະບັດ ດ້ວຍການໂຄສະນາ ເຜີຍແຜ່, ສະໜອງຂໍ້ມູນຂ່າວສານ ກ່ຽວກັບພັນທະບັດ ແລະ ການໃຫ້ນະໂຍບາຍອາກອນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 5 ຫຼັກການພື້ນຖານ ກ່ຽວກັບການອອກ ແລະ ການຈຳໜ່າຍພັນທະບັດ

ຫຼັກການພື້ນຖານ ກ່ຽວກັບການອອກ ແລະ ການຈຳໜ່າຍພັນທະບັດມີ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບແຜນງົບປະມານແຫ່ງລັດ ປະຈຳປີ, ໄລຍະກາງ ແລະ ໄລຍະຍາວ ທີ່ສະພາແຫ່ງຊາດໄດ້ຮັບຮອງ ທັງສອດຄ່ອງກັບຄວາມຕ້ອງການທຶນ ສຳລັບແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;
2. ຮັບປະກັນສະຖຽນລະພາບຂອງເສດຖະກິດມະຫາພາກ ແລະ ຄວາມໝັ້ນຄົງຂອງງົບປະມານແຫ່ງລັດ;
3. ຮັບປະກັນການຄຸ້ມຄອງ,ນຳໃຊ້ ແລະ ຈັດສັນແຫຼ່ງທຶນຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ;
4. ການມີສ່ວນຮ່ວມຂອງປະຊາຊົນ ແລະ ທຸກພາກສ່ວນເສດຖະກິດ-ສັງຄົມ;
5. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ;
6. ຮັບປະກັນຄວາມໂປ່ງໃສ, ຍຸດຕິທຳ ແລະ ສາມາດກວດສອບໄດ້.

### ມາດຕາ 6 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ພົວພັນກັບການອອກ ແລະ ການຈຳໜ່າຍພັນທະບັດລັດຖະບານ.

### ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ສະຖາບັນການເງິນ ແລະ ອົງການຈັດຕັ້ງສາກົນ ໃນວຽກງານລະດົມທຶນ ແລະ ຄຸ້ມຄອງພັນທະບັດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ, ສຳມະນາ, ການຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ເພື່ອພັດທະນາວຽກງານຄຸ້ມຄອງພັນທະບັດໃຫ້ມີຄຸນນະພາບ, ເຂັ້ມແຂງ, ທັນສະໄໝ ແລະ ຮັບປະກັນຄວາມໝັ້ນທ່ຽງຖານະການເງິນ ຂອງເສດຖະກິດມະຫາພາກ.

## ໝວດທີ 2
## ປະເພດ ແລະ ຮູບແບບຂອງພັນທະບັດ

### ມາດຕາ 8 ປະເພດພັນທະບັດ

ປະເພດພັນທະບັດມີ ດັ່ງນີ້:

1. ພັນທະບັດຄັງເງິນ;
2. ພັນທະບັດດຸ່ນດ່ຽງງົບປະມານ;

3. ພັນທະບັດລະດົມທຶນເພື່ອການພັດທະນາ;

4. ພັນທະບັດປະກອບທຶນ;

5. ພັນທະບັດ ເພື່ອເປົ້າໝາຍອື່ນ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 9 ພັນທະບັດຄັງເງິນ**

ພັນທະບັດຄັງເງິນ ແມ່ນພັນທະບັດດຸນດ່ຽງສະພາບຄ່ອງຂອງຄັງເງິນ, ນຳໃຊ້ເຂົ້າໃນການບໍລິຫານແຫຼ່ງເງິນຂອງຄັງເງິນ ໃນກໍລະນີຂາດສະພາບຄ່ອງ ໃນປີການງົບປະມານ ທີ່ສະພາແຫ່ງຊາດຮັບຮອງ ແລະ ມີອາຍຸຕໍ່າກວ່າໜຶ່ງປີລົງມາ.

**ມາດຕາ 10 ພັນທະບັດດຸນດ່ຽງງົບປະມານ**

ພັນທະບັດດຸນດ່ຽງງົບປະມານ ແມ່ນພັນທະບັດ ເພື່ອດຸນດ່ຽງງົບປະມານແຫ່ງລັດໃນແຕ່ລະປີ ທີ່ສະພາແຫ່ງຊາດຮັບຮອງເອົາ ແລະ ມີອາຍຸແຕ່ ໜຶ່ງປີຂຶ້ນໄປ.

**ມາດຕາ 11 ພັນທະບັດລະດົມທຶນເພື່ອການພັດທະນາ**

ພັນທະບັດລະດົມທຶນເພື່ອການພັດທະນາ ແມ່ນພັນທະບັດໄລຍະຍາວ ເພື່ອລະດົມທຶນສຳລັບການພັດທະນາ ແລະ ກໍ່ສ້າງພື້ນຖານໂຄງລ່າງ ທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ສະພາແຫ່ງຊາດໄດ້ຮັບ ຮອງເອົາ ຊຶ່ງມີອາຍຸເໝາະສົມກັບໄລຍະເວລາຂອງການລົງທຶນ.

**ມາດຕາ 12 ພັນທະບັດປະກອບທຶນ**

ພັນທະບັດປະກອບທຶນ ແມ່ນພັນທະບັດ ເພື່ອປະກອບທຶນໃໝ່ໃຫ້ແກ່ທະນາຄານທຸລະກິດລັດ ແລະ ລັດວິສາຫະກິດ ແນໃສ່ປັບປຸງໂຄງສ້າງທາງດ້ານການເງິນ ແລະ ສ້າງສະພາບຄ່ອງໃນການດຳເນີນທຸລະກິດ ໃຫ້ມີຄວາມເຂັ້ມແຂງ ຊຶ່ງມີອາຍຸເໝາະສົມກັບໄລຍະເວລາຂອງການປະກອບທຶນ.

**ມາດຕາ 13 ຮູບແບບພັນທະບັດ**

ຮູບແບບພັນທະບັດ ແມ່ນຮູບແບບເປັນ ໃບພັນທະບັດລວມ ແລະ ໃບພັນທະບັດ ທີ່ອອກໂດຍກະຊວງການເງິນ ຊຶ່ງມີຂໍ້ມູນພື້ນຖານ ດັ່ງນີ້:

1. ເລກທີໃບພັນທະບັດ;
2. ຊື່ພັນທະບັດ;
3. ຜູ້ອອກພັນທະບັດ;
4. ສະກຸນເງິນ;
5. ວັນ ເດືອນ ປີ ອອກພັນທະບັດ;
6. ອາຍຸຂອງພັນທະບັດ;
7. ວັນ ເດືອນ ປີ ຄົບກຳນົດໄຖ່ຖອນ;
8. ອັດຕາດອກເບ້ຍ;
9. ງວດການຈ່າຍດອກເບ້ຍ;
10. ມູນຄ່າກຳນົດ;
11. ຈຳນວນໜ່ວຍຂອງພັນທະບັດ;
12. ວົງເງິນລວມ;
13. ການກຳນົດລະຫັດພັນທະບັດ ຫຼື ລະຫັດຫຼັກຊັບ.

## ໝວດທີ 3

## ການອອກ ແລະ ການຈຳໜ່າຍພັນທະບັດ

### ມາດຕາ 14 ການອອກ ແລະ ການຈຳໜ່າຍພັນທະບັດ

ການອອກພັນທະບັດ ແມ່ນການອອກເຄື່ອງມືທາງດ້ານການເງິນ ປະເພດໜີ້ ເພື່ອລະດົມທຶນ ຢູ່ພາຍໃນ ແລະ ຕ່າງປະເທດ ໂດຍກະຊວງການເງິນ.

ການຈຳໜ່າຍພັນທະບັດ ແມ່ນການນຳເອົາພັນທະບັດໄປຈຳໜ່າຍໃຫ້ແກ່ຜູ້ລົງທຶນຢູ່ພາຍໃນ ແລະ ຕ່າງປະເທດ.

ທຶນທີ່ໄດ້ຈາກການອອກຈຳໜ່າຍພັນທະບັດ ຕ້ອງລວມສູນເຂົ້າງົບປະມານແຫ່ງລັດ ແລະ ນຳໃຊ້ແຫຼ່ງທຶນໃຫ້ສອດຄ່ອງຕາມເປົ້າໝາຍ.

### ມາດຕາ 15 ເງື່ອນໄຂການອອກພັນທະບັດ

ການອອກພັນທະບັດ ຕ້ອງອີງໃສ່ເງື່ອນໄຂ ດັ່ງນີ້:

1. ແຜນການອອກພັນທະບັດ;
2. ໂຄງການ/ແຜນການທີ່ຢູ່ໃນແຜນລົງທຶນຂອງລັດ ປະຈຳປີທີ່ຮັບຮອງຈາກສະພາແຫ່ງຊາດ;
3. ບັນດາເອກະສານດ້ານກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບການອອກພັນທະບັດ ເພື່ອຈຳໜ່າຍຢູ່ຕ່າງປະເທດ ແມ່ນຕ້ອງໄດ້ຮັບການຕົກລົງເຫັນດີຈາກລັດຖະບານ ແລະ ຖືກຕ້ອງຕາມລະບຽບການ ແລະ ບັນດາເງື່ອນໄຂ ຂອງປະເທດທີ່ຈະຈຳໜ່າຍພັນທະບັດ.

### ມາດຕາ 16 ແຜນອອກພັນທະບັດ

ກະຊວງການເງິນເປັນເຈົ້າການສ້າງແຜນອອກພັນທະບັດ ໃນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ເພື່ອນຳສະເໜີລັດຖະບານຮັບຮອງ ຊຶ່ງມີເນື້ອໃນພື້ນຖານ ດັ່ງນີ້:

1. ເປົ້າໝາຍການອອກພັນທະບັດ ແລະ ການນຳໃຊ້ແຫຼ່ງທຶນ ທີ່ໄດ້ຈາກການຈຳໜ່າຍພັນທະບັດ;
2. ບັນດານິຕິກຳທີ່ເປັນພື້ນຖານ ເພື່ອອອກພັນທະບັດ;
3. ປະເພດຂອງພັນທະບັດ;
4. ເງື່ອນໄຂດ້ານຕະຫລາດ ແລະ ການບໍລິຫານຄວາມສ່ຽງ;
5. ແຜນການຊຳລະຕົ້ນທຶນ ແລະ ດອກເບ້ຍພັນທະບັດ ພ້ອມທັງແຫຼ່ງທຶນທີ່ນຳມາຊຳລະ;
6. ລາຍຈ່າຍທີ່ກ່ຽວຂ້ອງກັບການອອກພັນທະບັດ.

### ມາດຕາ 17 ປະເພດ ແລະ ວິທີກຳນົດອັດຕາດອກເບ້ຍ

ອັດຕາດອກເບ້ຍພັນທະບັດມີສອງປະເພດ ດັ່ງນີ້:

1. ອັດຕາດອກເບ້ຍຄົງທີ່;
2. ອັດຕາດອກເບ້ຍລອຍໂຕ.

ການກຳນົດອັດຕາດອກເບ້ຍມີສອງວິທີ ດັ່ງນີ້:

1. ຜ່ານການປະມູນ;
2. ກະຊວງການເງິນ ປະສານສົມທົບກັບທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າກຳນົດອັດຕາດອກເບ້ຍພັນ ທະບັດໂດຍສອດຄ່ອງກັບສະພາບເສດຖະກິດ-ການເງິນ ໃນແຕ່ລະໄລຍະ.

**ມາດຕາ 18 ຮູບແບບການຈຳໜ່າຍພັນທະບັດ**

ການຈຳໜ່າຍພັນທະບັດປະກອບດ້ວຍ 2 ຮູບແບບ ຄື:

1. ຜ່ານການປະມູນ;
2. ບໍ່ຜ່ານການປະມູນ.

ການຈຳໜ່າຍພັນທະບັດຜ່ານການປະມູນ ປະກອບດ້ວຍ 2 ວິທີ ຄື:

1. ການປະມູນອັດຕາດອກເບ້ຍ ແມ່ນການຄັດເລືອກເອົາອັດຕາດອກເບ້ຍທີ່ດີທີ່ສຸດຕາມເງື່ອນໄຂຂອງຜູ້ອອກພັນ ທະບັດ ແລະ ກຳນົດເອົາອັດຕາດຽວ ເພື່ອຈ່າຍໃຫ້ຜູ້ຖືຄອງພັນທະບັດ;

2. ການປະມູນມູນຄ່າ ແມ່ນການທີ່ຜູ້ອອກພັນທະບັດເປັນຜູ້ກຳນົດອັດຕາດອກເບ້ຍ ແລະ ມູນຄ່າລວມຂອງພັນທະບັດ ທີ່ຈະຈຳໜ່າຍໃນແຕ່ລະຄັ້ງ ເພື່ອໃຫ້ຜູ້ປະມູນສາມາດກຳນົດມູນຄ່າພັນທະບັດທີ່ຕ້ອງ ການຊື້.

ການຈຳໜ່າຍພັນທະບັດ ໂດຍບໍ່ຜ່ານການປະມູນ ແມ່ນການທີ່ຜູ້ລົງທຶນສາມາດສັ່ງຈອງຊື້ພັນທະບັດ ຈາກຕົວແທນຈຳໜ່າຍພັນທະບັດໂດຍກົງ.

**ມາດຕາ 19 ການຂໍລະຫັດພັນທະບັດ (ISIN Code)**

ກະຊວງການເງິນ ດຳເນີນການຂໍລະຫັດພັນທະບັດນຳສູນຮັບຝາກຫຼັກຊັບ ກ່ອນຈຳໜ່າຍພັນທະບັດໃນແຕ່ລະຄັ້ງ.

## ໝວດທີ 4
## ການຈຳໜ່າຍພັນທະບັດ ຢູ່ພາຍໃນປະເທດ

**ມາດຕາ 20 ການຈຳໜ່າຍພັນທະບັດ ຢູ່ພາຍໃນປະເທດ.**

ການຈຳໜ່າຍພັນທະບັດຢູ່ພາຍໃນປະເທດ ສາມາດຂາຍໃຫ້ແກ່ຜູ້ລົງທຶນໂດຍກົງ ຫຼື ຜ່ານການປະມູນຢູ່ທະນາຄານແຫ່ງ ສປປ ລາວ ຫຼື ຜ່ານຕະຫຼາດຫຼັກຊັບລາວ ໃຫ້ຕົວແທນຈຳໜ່າຍ.

**ມາດຕາ 21 ຂັ້ນຕອນການຈຳໜ່າຍພັນທະບັດຢູ່ພາຍໃນປະເທດ**

ກະຊວງການເງິນ ຄົ້ນຄວ້າແຜນອອກພັນທະບັດ ປະຈຳປີ ເພື່ອສະເໜີລັດຖະບານພິຈາລະນາຕົກລົງ ຊຶ່ງມີຂັ້ນຕອນ ດັ່ງນີ້:

**ກ. ການຈຳໜ່າຍພັນທະບັດໃຫ້ແກ່ຜູ້ລົງທຶນໂດຍກົງ**

ກະຊວງການເງິນ ຈຳໜ່າຍພັນທະບັດໃຫ້ແກ່ຜູ້ລົງທຶນໂດຍກົງຢູ່ພາຍໃນປະເທດ ຕາມຂັ້ນຕອນ ດັ່ງນີ້:

1. ກະຊວງການເງິນ ອອກຂໍ້ຕົກລົງວ່າດ້ວຍການອອກພັນທະບັດ;
2. ຜູ້ລົງທຶນໂອນເງິນເຂົ້າບັນຊີເງິນຝາກຄັງເງິນແຫ່ງຊາດ ຢູ່ທະນາຄານແຫ່ງ ສປປ ລາວ;
3. ກະຊວງການເງິນອອກໃບພັນທະບັດ ໃຫ້ຜູ້ລົງທຶນ ຫຼື ອອກໃບພັນທະບັດລວມເພື່ອຈົດທະບຽນໃນຕະຫຼາດຫຼັກຊັບລາວ ພາຍໃນເຈັດວັນລັດຖະການ ຫຼັງຈາກທີ່ໄດ້ຮັບໃບຢັ້ງຢືນໃນການໂອນເງິນຈາກຜູ້ລົງທຶນ.

**ຂ. ການຈຳໜ່າຍພັນທະບັດໂດຍຜ່ານທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ເປັນສື່ກາງຈຳໜ່າຍພັນທະບັດ ຢູ່ພາຍໃນປະເທດ ຕາມຂັ້ນຕອນ ດັ່ງນີ້:

1. ກະຊວງການເງິນ ອອກຂໍ້ຕົກລົງວ່າດ້ວຍການອອກພັນທະບັດ;
2. ກະຊວງການເງິນ ຄັດເລືອກຕົວແທນຈຳໜ່າຍ;
3. ທະນາຄານແຫ່ງ ສປປ ລາວ ດຳເນີນການປະມູນໃຫ້ແກ່ຕົວແທນຈຳໜ່າຍ ແລະ ແຈ້ງຜົນຂອງການປະມູນ ຕາມລະບຽບການຂອງຕົນ ທີ່ກຳນົດໄວ້;

4. ທະນາຄານແຫ່ງ ສປປ ລາວ ໂອນເງິນຂອງຕົວແທນຈໍາໜ່າຍ ທີ່ຊະນະການປະມູນເຂົ້າບັນຊີເງິນຝາກຄັງເງິນແຫ່ງຊາດ ພາຍໃນ ສາມວັນລັດຖະການ ນັບແຕ່ມື້ແຈ້ງຜົນຂອງການປະມູນ;

5. ກະຊວງການເງິນ ອອກໃບພັນທະບັດໃຫ້ຕົວແທນຈໍາໜ່າຍທີ່ຊະນະການປະມູນ ຫຼື ອອກໃບພັນທະບັດລວມເພື່ອຈົດທະບຽນໃນຕະຫຼາດຫຼັກຊັບລາວ ພາຍໃນ ເຈັດວັນລັດຖະການ ຫຼັງຈາກທີ່ໄດ້ຮັບໃບຢັ້ງຢືນໃນການໂອນເງິນ ຈາກຕົວແທນຈໍາໜ່າຍ.

**ຄ. ການຈໍາໜ່າຍຜ່ານຕະຫຼາດຫຼັກຊັບລາວ**

ການຈໍາໜ່າຍພັນທະບັດ ໂດຍຜ່ານຕະຫຼາດຫຼັກຊັບລາວ ມີຂັ້ນຕອນຄື:

1. ກະຊວງການເງິນ ອອກຂໍ້ຕົກລົງວ່າດ້ວຍການອອກພັນທະບັດ;
2. ກະຊວງການເງິນ ຄັດເລືອກຕົວແທນຈໍາໜ່າຍ;
3. ຕົວແທນຈໍາໜ່າຍ ຕ້ອງແຕ່ງຕັ້ງທະນາຄານຕົວແທນ;
4. ໂຄສະນາຊວນຊື້ ໂດຍຕົວແທນຈໍາໜ່າຍ;
5. ດໍາເນີນການຈໍາໜ່າຍໂດຍຕົວແທນຈໍາໜ່າຍ ພາຍໃນເວລາທີ່ກໍານົດ ຕາມການຕົກລົງເຫັນດີຂອງກະຊວງການເງິນ ໃນການອອກພັນທະບັດແຕ່ລະໄລຍະ;
6. ຕົວແທນຈໍາໜ່າຍ ແຈ້ງໃຫ້ທະນາຄານຕົວແທນໂອນເງິນເຂົ້າບັນຊີເງິນຝາກຄັງເງິນແຫ່ງຊາດທີ່ເປີດ ຢູ່ທະນາຄານແຫ່ງ ສປປ ລາວ;
7. ຕົວແທນຈໍາໜ່າຍ ອອກໃບຢັ້ງຢືນການຊື້ພັນທະບັດ;
8. ກະຊວງການເງິນ ອອກໃບພັນທະບັດລວມຕາມມູນຄ່າຕົວຈິງທີ່ຈໍາໜ່າຍໄດ້ ພາຍໃນເຈັດວັນລັດ ຖະການ ພາຍຫຼັງສໍາເລັດການຈໍາໜ່າຍ ເພື່ອນໍາໄປຝາກໄວ້ຢູ່ສູນຮັບຝາກຫຼັກຊັບ.

**ມາດຕາ 22 ຕົວແທນຈໍາໜ່າຍ**

ຕົວແທນຈໍາໜ່າຍພັນທະບັດ ແມ່ນອົງການຈັດຕັ້ງທີ່ໄດ້ຮັບມອບສິດ ຈາກຜູ້ອອກພັນທະບັດ ເພື່ອດໍາເນີນການຂາຍພັນທະບັດລັດຖະບານ ຢູ່ພາຍໃນປະເທດ ຊຶ່ງມີໜ້າທີ່ເປັນຜູ້ຄໍ້າປະກັນການຈໍາໜ່າຍ ຫຼື ເປັນຜູ້ຄ້າພັນທະບັດ.

ຕົວແທນຈໍາໜ່າຍພັນທະບັດປະກອບດ້ວຍ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານຊັບສິນ ແລະ ສະຖາບັນການເງິນອື່ນໆ ທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 23 ເອກະສານປະກອບການຈໍາໜ່າຍພັນທະບັດຢູ່ພາຍໃນປະທດ**

ເອກະສານການຈໍາໜ່າຍພັນທະບັດປະກອບມີ ດັ່ງນີ້:

1. ແຜນອອກພັນທະບັດປະຈໍາປີ;
2. ຂໍ້ຕົກລົງວ່າດ້ວຍການອອກພັນທະບັດ;
3. ແຜນການຊໍາລະຕົ້ນທຶນ ແລະ ດອກເບ້ຍ;
4. ໜັງສືຊວນຊື້;
5. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 24 ການຮັບຝາກພັນທະບັດ**

ກະຊວງການເງິນ ນຳເອົາໃບພັນທະບັດລວມໄປຝາກໄວ້ຢູ່ສູນຮັບຝາກຫຼັກຊັບ ພ້ອມທັງມອບສິດໃຫ້ສູນຮັບຝາກຫຼັກຊັບ ເປັນຕົວແທນໃນການຂຶ້ນທະບຽນພັນທະບັດ ແລະ ຄຸ້ມຄອງປຶ້ມບັນຊີຜູ້ຖືຄອງພັນທະບັດ.

**ມາດຕາ 25 ການຈົດທະບຽນພັນທະບັດ**

ກະຊວງການເງິນ ສາມາດນຳເອົາພັນທະບັດໄປຈົດທະບຽນໃນຕະຫຼາດຫຼັກຊັບລາວ ໂດຍປະຕິບັດຕາມລະບຽບການຈົດທະບຽນຂອງຕະຫຼາດຫຼັກຊັບລາວ ເພື່ອດຳເນີນການຊື້-ຂາຍພັນທະບັດ.

**ມາດຕາ 26 ການປ່ຽນຜູ້ຖືຄອງພັນທະບັດ**

ການປ່ຽນຜູ້ຖືຄອງພັນທະບັດ ຈະຖືກດຳເນີນການຕາມລະບຽບການຂອງກະຊວງການເງິນ ໃນກໍລະນີທີ່ອອກເປັນໃບພັນທະບັດ. ໃນກໍລະນີທີ່ອອກເປັນໃບພັນທະບັດລວມທີ່ຈົດທະບຽນ ການປ່ຽນມືຜູ້ຖືຄອງພັນທະບັດຈະຖືກດຳເນີນຕາມລະບຽບການຂອງຕະຫຼາດຫຼັກຊັບລາວ.

**ມາດຕາ 27 ການອອກໃບຢັ້ງຢືນຍອດການຖືຄອງພັນທະບັດ**

ສູນຮັບຝາກຫຼັກຊັບ ເປັນຜູ້ອອກໃບຢັ້ງຢືນຍອດການຖືຄອງພັນທະບັດຈົດທະບຽນ ຕາມການສະເໜີຂອງຜູ້ລົງທຶນແຕ່ລະລາຍ. ຜູ້ຖືຄອງພັນທະບັດ ທີ່ມີຄວາມຕ້ອງການນຳເອົາພັນທະບັດ ໄປເປັນຫຼັກຊັບຄ້ຳປະກັນ ຕ້ອງສະເໜີຕໍ່ສູນຮັບຝາກຫຼັກຊັບ ເພື່ອດຳເນີນການຕາມລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ການຈຳໜ່າຍພັນທະບັດຢູ່ຕ່າງປະເທດ

**ມາດຕາ 28 ການຈຳໜ່າຍ ແລະ ເອກະສານການຈຳໜ່າຍພັນທະບັດ ຢູ່ຕ່າງປະເທດ**

ການຈຳໜ່າຍພັນທະບັດຢູ່ຕ່າງປະເທດ ແມ່ນການນຳເອົາພັນທະບັດອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນຢູ່ຕ່າງປະ ເທດ ໂດຍຜ່ານຕົວແທນຈຳໜ່າຍຕາມການຕົກລົງຂອງຜູ້ອອກພັນທະບັດ.

ເອກະສານການອອກຈຳໜ່າຍພັນທະບັດ ແມ່ນເອກະສານທາງກົດໝາຍ ຊຶ່ງກະຊວງການເງິນ ເປັນຜູ້ກະກຽມໂດຍມີການປະສານສົມທົບກັບບໍລິສັດທີ່ປຶກສາດ້ານການເງິນ ແລະ ບໍລິສັດທີ່ປຶກສາດ້ານກົດໝາຍ ແລະ ອົງການຈັດ ຕັ້ງອື່ນທີ່ກ່ຽວຂ້ອງ ບ່ອນທີ່ຈະອອກຈຳໜ່າຍພັນທະບັດ ຊຶ່ງປະກອບມີ ດັ່ງນີ້:

1. ໜັງສືຊວນຊື້;
2. ສັນຍາການໃຫ້ບໍລິການທີ່ປຶກສາດ້ານການເງິນ ແລະ ດ້ານກົດໝາຍ;
3. ສັນຍາການເປັນຕົວແທນຈຳໜ່າຍ;
4. ສັນຍາການເປັນຕົວແທນໂອນພັນທະບັດ;
5. ສັນຍາຕົວແທນຜູ້ຖືຄອງພັນທະບັດ;
6. ບົດປະເມີນການຈັດລຳດັບຄວາມໜ້າເຊື່ອຖື;
7. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 29 ຂັ້ນຕອນການກະກຽມອອກຈຳໜ່າຍພັນທະບັດຢູ່ຕ່າງປະເທດ**

ການກະກຽມອອກຈຳໜ່າຍພັນທະບັດຢູ່ຕ່າງປະເທດ ມີຂັ້ນຕອນດັ່ງນີ້:

1. ກະຊວງການເງິນ ເປັນເຈົ້າການສະເໜີ ລັດຖະບານ ເພື່ອຂໍອະນຸມັດການຈໍາໜ່າຍພັນທະບັດ ຢູ່ຕ່າງປະເທດ;

2. ກະຊວງການເງິນ ແຈ້ງການເຖິງຄະນະກໍາມະການຄຸ້ມຄອງຫຼັກຊັບເພື່ອຊາບ ກ່ຽວກັບການຈໍາໜ່າຍພັນທະບັດຢູ່ຕ່າງປະເທດ;

3. ກະຊວງການເງິນ ແຕ່ງຕັ້ງຄະນະຄົ້ນຄວ້າ ແລະ ໂຄສະນາຂົນຂວາຍ ການຈໍາໜ່າຍພັນທະບັດຢູ່ຕ່າງປະເທດ;

4. ກະຊວງການເງິນ ເປັນເຈົ້າການໃນການຄັດເລືອກທີ່ປຶກສາດ້ານ ການເງິນ, ກົດໝາຍ, ຕົວແທນຈໍາໜ່າຍແລະ ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື;

5. ສໍາເລັດບັນດາເອກະສານການຈໍາໜ່າຍພັນທະບັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 28 ຂອງດໍາລັດສະບັບນີ້ ແລະ ໃບຢັ້ງຢືນຄວາມຖືກຕ້ອງຈາກທີ່ປຶກສາດ້ານການເງິນ;

6. ໜັງສືສະແດງເຈດຈໍານົງໃນການຈໍາໜ່າຍພັນທະບັດ ເຖິງພາກສ່ວນທີ່ກ່ຽວຂ້ອງ ຂອງຕ່າງປະເທດ ທີ່ຈະຈໍາໜ່າຍພັນທະບັດ;

7. ໂຄສະນາການຈໍາໜ່າຍພັນທະບັດ.

**ມາດຕາ 30 ການໂອນເງິນທີ່ລະດົມໄດ້ຈາກການຈໍາໜ່າຍພັນທະບັດຢູ່ຕ່າງປະເທດ**

ການໂອນເງິນ ທີ່ລະດົມໄດ້ຈາກການຈໍາໜ່າຍພັນທະບັດຢູ່ຕ່າງປະເທດ ຕ້ອງໂອນເຂົ້າບັນຊີເງິນຝາກຄັງເງິນແຫ່ງຊາດ ຢູ່ທະນາຄານແຫ່ງ ສປປ ລາວ.

**ມາດຕາ 31 ການເກັບກໍາ ແລະ ສະໜອງຂໍ້ມູນຂ່າວສານຢູ່ຕ່າງປະເທດ**

ກະຊວງການເງິນ ມີໜ້າທີ່ຕິດຕາມທຸລະກໍາຊື້-ຂາຍພັນທະບັດຢູ່ຕ່າງປະເທດ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອສະໜອງຂໍ້ມູນກ່ຽວກັບສະພາບເສດຖະກິດຂອງປະເທດໃຫ້ນັກລົງທຶນຕ່າງປະເທດກ່ອນ ແລະ ຫລັງການຈໍາໜ່າຍພັນທະບັດ.

## ໝວດທີ 6
## ການຊໍາລະ ແລະ ການຊື້ຄືນພັນທະບັດ

**ມາດຕາ 32 ການຊໍາລະພັນທະບັດ**

ການຊໍາລະພັນທະບັດ ແມ່ນການປະຕິບັດພັນທະໃນການຊໍາລະຕົ້ນທຶນ ແລະ ດອກເບ້ຍ ທີ່ຕິດພັນກັບການອອກພັນທະບັດ ຢູ່ພາຍໃນ ແລະ ຕ່າງປະເທດໃນແຕ່ລະຄັ້ງ.

**ມາດຕາ 33 ການຊໍາລະຕົ້ນທຶນ ແລະ ດອກເບ້ຍພັນທະບັດ**

ກະຊວງການເງິນ ເປັນຜູ້ຈັດສັນງົບປະມານ ແລະ ດໍາເນີນການຊໍາລະຕົ້ນທຶນ ແລະ ດອກເບ້ຍ ໃຫ້ແກ່ຜູ້ຖືຄອງພັນທະບັດ ໂດຍຜ່ານທະນາຄານແຫ່ງ ສປປ ລາວ ຕາມລະບຽບການ.

**ມາດຕາ 34 ລາຍຈ່າຍກ່ຽວກັບການອອກ ແລະ ຈໍາໜ່າຍພັນທະບັດ**

ກະຊວງການເງິນເປັນຜູ້ຮັບຜິດຊອບບັນດາລາຍຈ່າຍທີ່ຕິດພັນກັບການອອກ ແລະ ຈໍາໜ່າຍພັນທະບັດໃນແຕ່ລະຄັ້ງ ປະກອບມີຄື:

1. ທີ່ປຶກສາດ້ານກົດໝາຍ;

2. ທີ່ປຶກສາດ້ານການເງິນ;
3. ບໍລິການຈົດທະບຽນໃນຕະຫຼາດຫຼັກຊັບລາວ;
4. ບໍລິການຂອງສູນຮັບຝາກຫຼັກຊັບ;
5. ຕົວແທນໃນການຈຳໜ່າຍ;
6. ອົງການຈັດລຳດັບຄວາມໜ້າເຊື່ອຖື;
7. ລາຍຈ່າຍອື່ນ ທີ່ກ່ຽວພັນກັບການອອກພັນທະບັດ.

**ມາດຕາ 35 ການຊື້ຄືນພັນທະບັດ**

ການຊື້ຄືນພັນທະບັດ ແມ່ນການຊຳລະຄືນຕົ້ນທຶນ ແລະ ດອກເບ້ຍ ຕາມມູນຄ່າທີ່ກຳນົດໄວ້ໃນໜ້າໃບພັນທະບັດ ພ້ອມທັງຄ່າເສຍໂອກາດ ຕາມການຕົກລົງລະຫວ່າງຜູ້ອອກ ແລະ ຜູ້ຖືຄອງພັນທະບັດ ໃນກໍລະນີຜູ້ອອກພັນທະບັດ ຕ້ອງການໄຖ່ຖອນພັນທະບັດກ່ອນຄົບກຳນົດ.

## ໝວດທີ 7
## ຜູ້ຖືຄອງພັນທະບັດ

**ມາດຕາ 36 ຜູ້ຖືຄອງ**

ຜູ້ຖືຄອງພັນທະບັດແມ່ນ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຊື່ໃນປຶ້ມບັນຊີທະບຽນຜູ້ຖືຄອງພັນທະບັດ.

ຜູ້ຖືຄອງພັນທະບັດ ມີສິດດັ່ງນີ້:

1. ໄດ້ຮັບການຊຳລະຄືນຕົ້ນທຶນ ແລະ ດອກເບ້ຍ ຢ່າງຄົບຖ້ວນເມື່ອຄົບກຳນົດເວລາ;
2. ສາມາດຊື້-ຂາຍ, ມອບ, ໂອນ ແລະ ຄ້ຳປະກັນ ຕາມລະບຽບການທີ່ກ່ຽວຂ້ອງ;
3. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນ ກ່ຽວກັບພັນທະບັດທີ່ຕົນຖືຄອງຕາມລະບຽບການ.

**ມາດຕາ 37 ການຍົກເວັ້ນ**

ຜູ້ຖືຄອງພັນທະບັດ ຈະໄດ້ຮັບການຍົກເວັ້ນອາກອນລາຍໄດ້ຈາກດອກເບ້ຍພັນທະບັດ ຕາມກົດໝາຍທີ່ກຳນົດໄວ້.

**ມາດຕາ 38 ການສິ້ນສຸດ**

ການສິ້ນສຸດກ່ຽວກັບການຖືຄອງພັນທະບັດ ແມ່ນພາຍຫຼັງທີ່ຜູ້ຖືຄອງພັນທະບັດ ໄດ້ຮັບການຊຳລະຄືນຕົ້ນທຶນ ແລະ ດອກເບ້ຍພັນທະບັດ ຢ່າງຄົບຖ້ວນ.

## ໝວດທີ 8
## ການລາຍງານ, ການເປີດເຜີຍ ແລະ ການເກັບຮັກສາຂໍ້ມູນ

**ມາດຕາ 39 ການລາຍງານຂໍ້ມູນ**

ກະຊວງການເງິນ ຕ້ອງປະຕິບັດລະບອບການລາຍງານ ກ່ຽວກັບການອອກ ແລະ ຈຳໜ່າຍພັນທະບັດໃຫ້ລັດຖະ ບານ ຕາມລະບຽບການ. ການລາຍງານ ຕ້ອງຮັບປະກັນຄວາມຄົບຖ້ວນ, ຖືກຕ້ອງ, ຊັດເຈນ ແລະ ທັນເວລາ.

### ມາດຕາ 40 ການເປີດເຜີຍຂໍ້ມູນ

ກະຊວງການເງິນ ຕ້ອງປະຕິບັດລະບອບການເປີດເຜີຍຂໍ້ມູນ ຕາມລະບຽບການທີ່ກຳນົດໄວ້ ແລະ ຂໍ້ມູນທີ່ເປີດເຜີຍຕໍ່ມວນຊົນ ຕ້ອງມີຄວາມຈິງ ແລະ ເຊື່ອຖືໄດ້ ຕາມລະບຽບການ.

### ມາດຕາ 41 ການເກັບຮັກສາຂໍ້ມູນພັນທະບັດ

ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ຕະຫຼາດຫຼັກຊັບລາວ ຕ້ອງເກັບຮັກສາຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງ ກັບການດຳເນີນທຸລະກຳພັນທະບັດ ຢ່າງໜ້ອຍສິບປີ ໃນຮູບແບບເອກະສານ ຫຼື ແບບເອເລັກໂຕຣນິກ.

## ໝວດທີ 9
## ຂໍ້ຫ້າມ

### ມາດຕາ 42 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ອອກພັນທະບັດ ເກີນແຜນ ແລະ ບໍ່ນອນຢູ່ໃນແຜນ ທີ່ສະພາແຫ່ງຊາດຮັບຮອງ;
2. ດຳເນີນບັນດາກິດຈະກຳກ່ຽວກັບການອອກພັນທະບັດ ທີ່ນຳຄວາມເສຍຫາຍມາສູ່ເສດຖະກິດຂອງຊາດ;
3. ປົກປິດ, ບິດເບືອນ ຫຼື ທຳລາຍຂໍ້ມູນ ແລະ ຫຼັກຖານ ກ່ຽວກັບການອອກພັນທະບັດ ທີ່ລະເມີດກົດໝາຍ ແລະ ລະບຽບການ;
4. ມີພຶດຕິກຳອື່ນ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

### ມາດຕາ 43 ຂໍ້ຫ້າມສຳລັບພະນັກງານ

ຫ້າມພະນັກງານກະຊວງການເງິນ ແລະ ຂະແໜງການທີ່ກ່ຽວຂ້ອງກັບການອອກ ແລະ ການຈຳໜ່າຍພັນທະບັດມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ກ່ຽວກັບການອອກ ແລະ ການຈຳໜ່າຍພັນທະບັດກ່ອນໄດ້ຮັບອະນຸຍາດ;
2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ບຸກຄົນອື່ນ;
3. ໃຫ້ຂໍ້ມູນກ່ຽວກັບການອອກ ແລະ ການຈຳໜ່າຍພັນທະບັດທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ແກ່ມວນຊົນ;
4. ທວງເອົາ, ໃຫ້ ຫຼື ຮັບສິນບົນ ຫຼື ສິ່ງຕອບແທນອື່ນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ 10
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 44 ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບພັນທະບັດ

ຂໍ້ຂັດແຍ່ງ ກ່ຽວກັບການອອກ ແລະ ການຈຳໜ່າຍພັນທະບັດ ສາມາດແກ້ໄຂດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອີງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການແກ້ໄຂໂດຍສານປະຊາຊົນ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 45 ການປະນີປະນອມ**

ຂໍ້ຂັດແຍ່ງ ທີ່ເກີດຂຶ້ນກ່ຽວກັບການອອກ ແລະ ຈຳໜ່າຍພັນທະບັດ ຄູ່ກໍລະນີ ຕ້ອງພະຍາຍາມແກ້ໄຂຂໍ້ຂັດແຍ່ງດ້ວຍການປຶກສາຫາລື ແລະ ປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 46 ການແກ້ໄຂທາງດ້ານບໍລິຫານ**

ຂໍ້ຂັດແຍ່ງກ່ຽວກັບການອອກ ແລະ ການຈຳໜ່າຍພັນທະບັດ ທີ່ມີລັກສະນະບໍລິຫານ ຊຶ່ງຢູ່ພາຍໃຕ້ຂອບເຂດຄວາມຮັບຜິດຊອບຂອງກະຊວງການເງິນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຄູ່ກໍລະນີ ສາມາດສະເໜີຕໍ່ກະຊວງການເງິນ ແລະ ຂະແໜງການອື່ນນັ້ນ ເພື່ອພິຈາລະນາແກ້ໄຂ ຕາມລະບຽບການ.

**ມາດຕາ 47 ການແກ້ໄຂໂດຍອີງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຂໍ້ຂັດແຍ່ງກ່ຽວກັບການອອກ ແລະ ການຈຳໜ່າຍພັນທະບັດ ຄູ່ກໍລະນີ ມີສິດສະເໜີຕໍ່ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພິຈາລະນາແກ້ໄຂ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 48 ການແກ້ໄຂໂດຍສານປະຊາຊົນ**

ຂໍ້ຂັດແຍ່ງກ່ຽວກັບການອອກ ແລະ ການຈຳໜ່າຍພັນທະບັດ ຄູ່ກໍລະນີ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາ ຕັດສິນ ຕາມກົດໝາຍ.

**ມາດຕາ 49 ການແກ້ໄຂທີ່ມີລັກສະນະສາກົນ**

ຂໍ້ຂັດແຍ່ງກ່ຽວກັບການອອກ ແລະ ການຈຳໜ່າຍພັນທະບັດທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 11
## ການຄຸ້ມຄອງ ແລະ ກວດກາວຽກງານພັນທະບັດ

**ມາດຕາ 50 ການຄຸ້ມຄອງວຽກງານພັນທະບັດ**

ລັດຖະບານ ແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງວຽກງານພັນທະບັດ ຢ່າງລວມສູນ ໂດຍມອບໃຫ້ກະຊວງການເງິນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງໃນການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານພັນທະບັດ ເມື່ອມີຄວາມຈຳເປັນ.

**ມາດຕາ 51 ຄວາມຮັບຜິດຊອບຂອງກະຊວງການເງິນ**

ກະຊວງການເງິນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນການອອກ ແລະ ຈຳໜ່າຍ, ນຳໃຊ້ທຶນ, ຊຳລະຕົ້ນທຶນ ແລະ ດອກເບ້ຍພັນທະບັດ ຢູ່ພາຍໃນ ແລະ ຕ່າງປະເທດ;

2. ຂາຍເງິນຕາຕ່າງປະເທດ ທີ່ໄດ້ມາຈາກການຈຳໜ່າຍພັນທະບັດ ໃນແຕ່ລະຄັ້ງ ໃຫ້ທະນາຄານແຫ່ງ ສປປ ລາວ;

3. ສ້າງ ແລະ ປະຕິບັດແຜນການອອກ ແລະ ຈຳໜ່າຍພັນທະບັດ ຢູ່ພາຍໃນ ແລະ ຕ່າງປະເທດ;

4. ປະສານສົມທົບກັບທະນາຄານ ແຫ່ງ ສປປ ລາວ ໃນການກຳນົດອັດຕາດອກເບ້ຍພັນທະບັດ;

5. ສະໜອງຂໍ້ມູນການອອກ ແລະ ຈຳໜ່າຍພັນທະບັດ ໃຫ້ທະນາຄານແຫ່ງສປປ ລາວ ແລະ ຕະຫຼາດຫຼັກຊັບລາວ;

6. ເປັນໃຈກາງ ໃນການໂຄສະນາຂົນຂວາຍ, ເຈລະຈາ, ລາຍງານຜົນ, ຈຳໜ່າຍພັນທະບັດ ແລະ ຄຸ້ມຄອງດ້ານການເງິນຕໍ່ພັນທະບັດດັ່ງກ່າວ;

7. ວຽກງານອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 52 ຄວາມຮັບຜິດຊອບຂອງທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສະໜອງເງິນຕາຕ່າງປະເທດໃຫ້ກະຊວງການເງິນ ເພື່ອຊຳລະຄືນຕົ້ນທຶນ ແລະ ດອກເບ້ຍພັນທະ ບັດລັດຖະບານ ທີ່ອອກເປັນສະກຸນເງິນຕາຕ່າງປະເທດ ເມື່ອຄົບກຳນົດໄຖ່ຖອນ;

2. ປະສານສົມທົບກັບກະຊວງການເງິນກ່ຽວກັບການອອກ ແລະ ຈຳໜ່າຍພັນທະບັດຢູ່ພາຍໃນ ແລະ ຕ່າງປະເທດ;

3. ເປັນສື່ກາງໃນການຈຳໜ່າຍພັນທະບັດຢູ່ ພາຍໃນປະເທດ;

4. ເປັນຕົວແທນຊຳລະຕົ້ນທຶນ ແລະ ດອກເບ້ຍພັນທະບັດທີ່ຈຳໜ່າຍຢູ່ພາຍໃນ ແລະ ຕ່າງປະເທດ;

5. ສະໜອງຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງ ຕາມການສະເໜີຂອງກະຊວງການເງິນ;

6. ວຽກງານອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 53 ຄວາມຮັບຜິດຊອບຂອງກະຊວງຍຸຕິທຳ**

ກະຊວງຍຸຕິທຳມີຄວາມຮັບຜິດຊອບ ດັ່ງນີ້:

1. ໃຫ້ຄຳປຶກສາດ້ານທາງດ້ານກົດໝາຍ ກ່ຽວກັບການອອກ ແລະ ຈຳໜ່າຍພັນທະບັດ ຢູ່ພາຍໃນ ແລະ ຕ່າງປະເທດໃນແຕ່ລະຄັ້ງ;

2. ທົບທວນ ແລະ ຕິດຕາມກວດກາບັນດາສັນຍາຕ່າງໆ ກ່ຽວກັບການອອກ ແລະ ຈຳໜ່າຍພັນທະ ບັດຢູ່ຕ່າງປະເທດ ໃນແຕ່ລະໄລຍະ;

3. ວຽກງານອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 54 ຄວາມຮັບຜິດຊອບຂອງຄະນະກຳມະການຄຸ້ມຄອງຫຼັກຊັບ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະສານສົມທົບກັບກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ຕະຫຼາດຫຼັກຊັບລາວ ເພື່ອອອກລະຫັດພັນທະບັດ;

2. ຕິດຕາມກວດກາ ການຊື້-ຂາຍ ພັນທະບັດ ຢູ່ໃນຕະຫຼາດຫຼັກຊັບລາວ;

3. ວຽກງານອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 55 ຄວາມຮັບຜິດຊອບຂອງຕະຫຼາດຫຼັກຊັບລາວ ແລະ ສູນຮັບຝາກຫຼັກຊັບ**

ຕະຫຼາດຫຼັກຊັບລາວ ແລະ ສູນຮັບຝາກຫຼັກຊັບ ມີຄວາມຮັບຜິດຊອບ ດັ່ງນີ້:

1. ອອກລະຫັດຫຼັກຊັບສາກົນໃຫ້ແກ່ກະຊວງການເງິນ;
2. ຄຸ້ມຄອງການດໍາເນີນທຸລະກໍາການຊື້-ຂາຍພັນທະບັດ;
3. ສະໜອງຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງ ຕາມການສະເໜີຂອງກະຊວງການເງິນ;
4. ປະສານສົມທົບກັບທະນາຄານແຫ່ງ ສປປ ລາວ ເພື່ອດໍາເນີນການຊໍາລະເງິນ;
5. ວຽກງານອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 56 ກະຊວງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ**

ກະຊວງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຕິດຕາມ, ກວດກາການຄຸ້ມຄອງ ແລະ ນໍາໃຊ້ທຶນຈາກການອອກຈໍາໜ່າຍພັນທະບັດ;
2. ປະສານສົມທົບກັບກະຊວງການເງິນ ແລະ ຂະແໜງການທີ່ກ່ຽວຂ້ອງໃນການແນະນໍາ, ຕິດຕາມ ກວດກາ ແລະ ຜັນຂະຫຍາຍການປະຕິບັດດໍາລັດສະບັບນີ້;
3. ປະສານສົມທົບກັບກະຊວງການເງິນໃນການສະໜອງຂໍ້ມູນ ຢ່າງເປັນປະຈໍາ ຫຼື ບາງຄັ້ງຄາວ ເພື່ອຮັບໃຊ້ໃຫ້ແກ່ການຈັດລະດັບຄວາມໜ້າເຊື່ອຖືຂອງປະເທດ ແລະ ເຮັດວຽກຮ່ວມກັບອົງກອນຈັດລະດັບຄວາມໜ້າເຊື່ອຖື;
4. ໃຫ້ຄວາມຮ່ວມມື ກັບກະຊວງການເງິນ ແລະ ກະຊວງຍຸຕິທໍາ ໃນການສະໜອງຂໍ້ມູນທີ່ຈໍາເປັນ ເພື່ອປະກອບເອກະສານດ້ານກົດໝາຍໃນການອອກ ແລະ ຈໍາໜ່າຍພັນທະບັດ ຢູ່ພາຍໃນ ແລະ ຕ່າງປະເທດ;
5. ວຽກງານອື່ນ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ 12
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 57 ນະໂຍບາຍຕໍ່ຜູ້ມີຜົນງານ**

ອົງການຈັດຕັ້ງ, ການຈັດຕັ້ງ, ນິຕິບຸກຄົນ ແລະບຸກຄົນທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຕາມລະບຽບການ.

**ມາດຕາ 58 ມາດຕະການຕໍ່ຜູ້ລະເມີດ**

ອົງການຈັດຕັ້ງ, ການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນທີ່ລະເມີດບົດບັນຍັດຂອງດໍາລັດສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ ແລະ ເສດຖະກິດຂອງຊາດ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ ຫຼື ດໍາເນີນຄະດີຕາມກົດໝາຍອາຍາ ຕາມກໍລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ.

## ໝວດທີ 13
## ບົດບັນຍັດສຸດທ້າຍ

**ມາດຕາ 59 ການຈັດຕັ້ງປະຕິບັດ**

ກະຊວງການເງິນເປັນຜູ້ຜັນຂະຫຍາຍ ແລະ ແນະນຳການຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ ແລະ ຂະແໜງການທີ່ກ່ຽວຂ້ອງ ຕ້ອງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 60 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ